# ຜູ້ລົງຄະແນນສຽງໃໝ່

VOTE 2025

ບໍ່ເຄີຍລົງຄະແນນສຽງບໍ?ບໍ່ຕ້ອງຫ່ວງ-ຂັ້ນຕອນເຫຼົ່ານີ້ອະທິບາຍຂະບວນການໃຫ້ທ່ານຮູ້.

## *ໄປສະຖານທີ່ເລືອກຕັ້ງຂອງທ່ານ*

ທ່ານຕ້ອງລົງຄະແນນສຽງຢູ່ສະຖານທີ່ເລືອກຕັ້ງຂອງທ່ານທີ່ທ່ານໄດ້ຮັບມອບໝາຍ ຕາມທຳມະດາແລ້ວແມ່ນຕັ້ງຢູ່ໃກ້ກັບບ່ອນທີ່ທ່ານອາໄສຢູ່ ຊອກຫາສະຖານທີ່ເລືອກຕັ້ງຂອງທ່ານທີ່ mnvotes.gov ສະຖານທີ່ປ່ອນບັດສ່ວນຫຼາຍເປີດແຕ່ 7 ໂມງເຊົ້າເຖິງ 8 ໂມງແລງ

## *ເຊັນຊື່ເຂົ້າສູ່ລະບົບຫຼືລົງທະບຽນ*

ຖ້າວ່າທ່ານໄດ້ລົງທະບຽນລົງຄະແນນສຽງໄວ້ແລ້ວ ຊື່ຂອງທ່ານຈະຢູ່ໃນບັນຊີລາຍຊື່ຂອງຜູ້ລົງຄະແນນສຽງ ທ່ານພຽງແຕ່ເຊັນລາຍເຊັນຂອງທ່ານໃສ່ໃກ້ກັບຊື່ຂອງທ່ານ ຖ້າວ່າທ່ານໄດ້ລົງທະບຽນແລ້ວ ທ່ານບໍ່ຈຳເປັນຕ້ອງສະແດງບັດປະຈຳຕົວໃນເວລາທີ່ທ່ານເຊັນຊື່ເຂົ້າລົງຄະແນນ

ຖ້າວ່າທ່ານບໍ່ໄດ້ລົງທະບຽນກ່ອນວັນເລືອກຕັ້ງ ທ່ານຈະຕ້ອງສະແດງຫຼັກຖານທີ່ຢູ່ປັດຈຸບັນຂອງທ່ານໃຫ້ເຫັນ ຍົກຕົວຢ່າງເຊັ່ນວ່າ ທ່ານສາມາດສະແດງໃບຂັບຂີ່ຂອງລັດມິນນີໂຊຕາ ຫຼືບັດປະຈຳຕົວລັດມິນນີໂຊຕາ ຫຼືທ່ານສາມາດສະແດງບັດປະຈຳຕົວທີ່ມີຮູບພາບແລະມີທີ່ຢູ່ເກົ່າຂອງທ່ານພ້ອມກັບໃບບິວເກັບເງິນທີ່ສະແດງທີ່ຢູ່ປັດຈຸບັນຂອງທ່ານ

ສຳລັບລາຍຊື່ປະເພດຂອງບັດປະຈຳຕົວແລະເອກກະສານທຸກອັນຂອງທ່ານທີ່ສາມາດເອົາມາ ໃຫ້ໄປເບິ່ງທີ່ mnvotes.gov

### *ວັນທີຂອງປີ 2025*

***ການເລືອກຕັ້ງຂັ້ນຕົ້ນ***
*ວັນອັງຄານ, ວັນທີ 12 ສິງຫາ*

***ລົງຄະແນນສຽງຈະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້***
*ລົງຄະແນນສຽງທາງໄປສະນີ ຫຼື ດ້ວຍຕົວເອງວັນທີ 19 ກັນຍາ ເຖິງ 3 ພຶດສະຈິກາ*

***ລົງທະບຽນເພື່ອລົງຄະແນນສຽງ***
*ລົງທະບຽນລ່ວງໜ້າ ພາຍໃນວັນທີ 14 ຕຸລາ ເພື່ອຊ່ວຍປະຢັດເວລາ ໃນວັນເລືອກຕັ້ງ*

***ວັນເລືອກຕັ້ງ***
*ວັນອັງຄານ ວັນທີ່4ເດືອນພຶດສະຈິກາ*

ມີຕໍ່ຂ້າງຫລັງ...

*ສຳນັກງານລັດຖະມົນຕີ ລັດມິນນີໂຊຕາ*
**mnvotes.gov • 1-877-600-VOTE**

# ຜູ້ລົງຄະແນນສຽງໃໝ່

VOTE 2025

...ສືບຕໍ່ຈາກຂ້າງໜ້າ

## *ການລົງຄະແນນສຽງ*

ທ່ານຈະລົງຄະແນນສຽງໃນພື້ນທີ່ສ່ວນຕົວແລະການລົງຄະແນນສຽງຂອງທ່ານເປັນຄວາມລັບ ລົງຄະແນນສຽງໂດຍໃຊ້ບິກຫຼືສໍແລະໝາຍສີດຳໃນຮູບໄຂ່ໃຫ້ເຕັມທີ່ຢູ່ຕິດກັບຂໍ້ທີ່ທ່ານເລືອກ

ຄຳແນະນຳການລົງຄະແນນສຽງຈະບອກຈຳນວນຜູ້ສະໝັກທີ່ທ່ານສາມາດເລືອກໄປປະຈຳໃນແຕ່ລະສຳນັກງານ ປົກກະຕິແລ້ວມັນຈະຂຽນວ່າ 'ເລືອກຜູ້ດຽວ' ບາງສຳນັກງານທ້ອງຖິ່ນອາດຈະມີຫຼາຍກວ່າໜຶ່ງຕຳແໜ່ງທີ່ຕ້ອງບັນຈຸໃນແຕ່ລະສຳນັກງານ

ບັດລົງຄະແນນຂອງທ່ານຈະຖືກນັບເຖິງແມ່ນວ່າທ່ານບໍ່ໄດ້ລົງຄະແນນສຽງໃນທຸກການເລືອກຕັ້ງຫຼືທຸກຄຳຖາມ

## *ເອົາບັດລົງຄະແນນສຽງຂອງທ່ານໄປປ່ອນໃສ່ຫີບລົງຄະແນນ*

ຫຼັງຈາກທີ່ທ່ານໄດ້ລົງຄະແນນ ເອົາບັດລົງຄະແນນສຽງຂອງທ່ານປ່ອນໃສ່ຫີບເຄື່ອງລົງຄະແນນສຽງແລ້ວ ຢ່າລືມເອົາສະຕິກເກີ "ຂ້າພະເຈົ້າລົງຄະແນນສຽງແລ້ວ" ຂອງທ່ານ ກ່ອນທີ່ທ່ານຈະອອກໄປ!

## *ລົງຄະແນນສຽງແຕ່ທຳອິດໂດຍໃຊ້ບັດລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້*

ທ່ານສາມາດລົງຄະແນນສຽງແຕ່ທຳອິດໄດ້ທີ່ຫ້ອງການເລືອກຕັ້ງທ້ອງຖິ່ນຂອງທ່ານເລີ່ມຕົ້ນແຕ່ວັນສຸກ ວັນທີ 19 ກັນຍາ ນອກນັ້ນທ່ານຍັງສາມາດສະໝັກຂໍບັດລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ສົ່ງໃຫ້ທ່ານທາງໄປສະນີໄດ້ ຊອກຫາຫ້ອງການເລືອກຕັ້ງທ້ອງຖິ່ນຂອງທ່ານຫຼືຂໍບັດລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ໃຫ້ໄປທີ່ mnvotes.gov

### *ຢຸດເຮັດວຽກເພື່ອໄປລົງຄະແນນສຽງ*

*ທ່ານມີສິດຢຸດເຮັດວຽກເພື່ອໄປລົງຄະແນນສຽງໂດຍບໍ່ຕ້ອງຖືກຫຼຸດເງິນຂອງທ່ານ, ເສຍເວລາວັນຢຸດ ຫຼືເວລາພັກຮ້ອນຂອງທ່ານ*

*ສຳນັກງານລັດຖະມົນຕີ ລັດມິນນິໂຊຕາ*

**mnvotes.org • 1-877-600-VOTE**